ສາລະບານ


ມະຕິຕົກລົງ ..... 3

ລັດຖະດຳລັດ ..... 4

ກົດໝາຍ ວ່າດ້ວຍການອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ ..... 5

ໝວດທີ I ບົດບັນຍັດທົ່ວໄປ ..... 5

ມາດຕາ 1. ໜ້າທີ່ຂອງກົດໝາຍວ່າດ້ວຍ ການອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ ..... 5

ມາດຕາ 2. ນິຍາມຄຳສັບ ..... 5

ມາດຕາ 3. ສິດ ແລະ ພັນທະຂອງພົນລະເມືອງໃນການຮັກສາສຸຂະພາບ ..... 6

ມາດຕາ 4. ຄວາມຮັບຜິດຊອບຂອງລັດຕໍ່ສຸຂະພາບຂອງພົນລະເມືອງ ..... 6

ມາດຕາ 5. ການສົ່ງເສີມ ການລົງທຶນໃນວຽກງານອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ ..... 6

ມາດຕາ 6. ການຮ່ວມມື ກັບ ສາກົນ ..... 6

ໝວດທີ II ການອະນາໄມ ..... 7

ມາດຕາ 7. ຄວາມໝາຍສຳຄັນ ຂອງການອະນາໄມ ..... 7

ມາດຕາ 8. ອົງປະກອບ ຂອງການອະນາໄມ ..... 7

ມາດຕາ 9. ການອະນາໄມ ສ່ວນບຸກຄົນ ..... 7

ມາດຕາ 10. ການອະນາໄມ ຄອບຄົວ ..... 7

ມາດຕາ 11. ການອະນາໄມ ຊຸມຊົນ ..... 8

ມາດຕາ 12. ການອະນາໄມນ້ຳດື່ມແລະນ້ຳໃຊ້ ..... 8

ມາດຕາ 13. ການອະນາໄມ ອາຫານ ແລະ ເຄື່ອງບໍລິໂພກ ..... 8

ມາດຕາ 14. ການອະນາໄມ ເຄຫະສະຖານ ..... 9

ມາດຕາ 15. ການອະນາໄມໂຮງແຮມ ແລະ ເຮືອນພັກ ..... 9

ມາດຕາ 16. ການອະນາໄມ ໂຮງຮຽນ ແລະ ສະຖາບັນການສຶກສາ ..... 9

ມາດຕາ 17. ການອະນາໄມ ໂຮງໝໍ, ສຸກສາລາ ແລະ ຫ້ອງກວດພະຍາດ ..... 10

ມາດຕາ 18. ການອະນາໄມ ໃນການອອກແຮງງານ ..... 10

ມາດຕາ 19. ການອະນາໄມ ໃນການຜະລິດ ..... 11

ມາດຕາ 20. ການອະນາໄມ ສະຖານທີ່ກໍ່ສ້າງ ແລະ ສ້ອມແປງ ..... 11

ມາດຕາ 21. ການ ອະນາໄມ ສະຖານທີ່ສາທາລະນະ ..... 11

ມາດຕາ 22. ການອະນາໄມ ຕະຫລາດ ..... 12

ມາດຕາ 23. ການອະນາໄມ ໃນການຊາປະນະກິດສົບ ..... 12

ມາດຕາ 24. ການອະນາໄມ ສິ່ງແວດລ້ອມ ..... 12

ໝວດທີ III ການກັນພະຍາດ ..... 13

ມາດຕາ 25. ຄວາມໝາຍສຳຄັນ ຂອງການກັນພະຍາດ ..... 13

ມາດຕາ26. ອົງປະກອບຂອງການກັນພະຍາດ ..... 13

ໝວດທີ IV ການສົ່ງເສີມສຸຂະພາບ ..... 14

ມາດຕາ 27. ຄວາມໝາຍສຳຄັນ ຂອງການສົ່ງເສີມສຸຂະພາບ ....14
ມາດຕາ 28. ອົງປະກອບ ຂອງການສົ່ງເສີມສຸຂະພາບ ....14
ມາດຕາ 29. ການສຸຂະສຶກສາ....14
ມາດຕາ 30. ການຮັກສາສຸຂະພາບແມ່ ແລະ ເດັກ ....14
ມາດຕາ 31. ການຮັກສາສຸຂະພາບໄວໜຸ່ມ ແລະ ໄວຈະເລີນພັນ....15
ມາດຕາ 32. ການຮັກສາສຸຂະພາບຜູ້ສູງອາຍຸ, ຜູ້ເສຍອົງຄະ ແລະ ຄົນພິການ ....15
ມາດຕາ 33. ການໂພຊະນາການ....16
ມາດຕາ 34. ກິລາ, ກາຍະບໍລິຫານ ແລະ ສິລະປະ ....16
ມາດຕາ 35. ສວນສາທາລະນະ, ເຂດຂຽວ ແລະ ສະຖານທີ່ພັກຜ່ອນ ....16
ໝວດທີ V ການຊຸກຍູ້ ຈັດຕັ້ງ ປະຕິບັດວຽກງານອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ....16
ມາດຕາ36. ການຊຸກຍູ້ການຈັດຕັ້ງປະຕິບັດວຽກງານອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ16
ມາດຕາ 37. ການລົງທຶນ ....17
ມາດຕາ 38. ການປະກອບສ່ວນ ຂອງສັງຄົມ ....17
ມາດຕາ 39. ການຄົ້ນຄ້ວາວິທະຍາສາດ....17
ໝວດທີ VI ການຄຸ້ມຄອງ ແລະ ກວດກາວຽກງານ ອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ....17
ມາດຕາ40. ອົງການຄຸ້ມຄອງແລະກວດກາວຽກງານອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ 17
ມາດຕາ41. ສິດ ແລະໜ້າທີ່ຂອງອົງການຄຸ້ມຄອງ ແລະກວດກາວຽກງານອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ ....18
ມາດຕາ 42. ການກວດກາ ວຽກງານອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ ....18
ມາດຕາ 43. ປະເພດ ການກວດກາ....18
ໝວດທີ VII ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການ ຕໍ່ຜູ້ລະເມີດ....19
ມາດຕາ 44. ນະໂຍບາຍຕໍ່ຜູ້ມີຜົນງານ....19
ມາດຕາ 45. ມາດຕະການຕໍ່ຜູ້ລະເມີດ ....19
ມາດຕາ 46. ມາດຕະການສຶກສາອົບຮົມ ....19
ມາດຕາ 47. ມາດຕະການປັບໃໝ ....19
ມາດຕາ 48. ມາດຕະການທາງອາຍາ....20
ໝວດທີ VIII ບົດບັນຍັດສຸດທ້າຍ ....20
ມາດຕາ 49. ການຈັດຕັ້ງປະຕິບັດ ....20
ມາດຕາ 50. ຜົນສັກສິດ ....20

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 04 /ສພຊ

ວຽງຈັນ, ວັນທີ 10 ເມສາ 2001

# ມະຕິຕົກລົງ

**ຂອງສະພາແຫ່ງຊາດແຫ່ງ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍ ການອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ

- ອີງຕາມມາດຕາ 40 ຂໍ້ 2 ຂອງລັດຖະທຳມະນູນ ແລະ ມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;
- ອີງຕາມການສະເໜີຂອງນາຍົກລັດຖະມົນຕີ ສະບັບເລກທີ 29 / ນຍ, ລົງວັນທີ 19 ມີນາ 2001.

ພາຍຫລັງທີ່ໄດ້ຄົ້ນຄ້ວາ, ພິຈາລະນາຢ່າງກ້ວາງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ ໃນກອງປະຊຸມສະໄໝສາມັນເທື່ອທີ່ 7 ຂອງສະພາແຫ່ງຊາດຊຸດທີ IV, ໃນວາລະປະຊຸມຕອນເຊົ້າຂອງວັນທີ 10 ເມສາ 2001.

**ກອງປະຊຸມໄດ້ຕົກລົງ:**

<u>ມາດຕາ 1</u>: ຮັບຮອງເອົາກົດໝາຍ ວ່າດ້ວຍ ການອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບດ້ວຍຄະແນນສຽງເປັນເອກະສັນ.

<u>ມາດຕາ 2</u>: ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ

ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 49 ສປປ

# ລັດຖະດຳລັດ

**ຂອງປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍການອະນາໄມ,
ກັນພະຍາດ ແລະ ສົ່ງເສີມສຸຂະພາບ

---

- ອີງຕາມລັດຖະທຳມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ໝວດທີ V,ມາດຕາ 53, ຂໍ້ 1;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ສະບັບເລກທີ 04/ ສພຊ, ລົງວັນທີ 10 ເມສາ 2001 ກ່ຽວກັບການຕົກລົງຮັບຮອງເອົາກົດຫມາຍ ວ່າດ້ວຍການອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ;
- ອີງຕາມໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 04 /ຄປຈ, ລົງວັນທີ 20 ເມສາ 2001.

ປະທານປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:

<u>ມາດຕາ 1</u>: ປະກາດໃຊ້ກົດຫມາຍ ວ່າດ້ວຍການອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ.

<u>ມາດຕາ 2</u>: ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 25 ເມສາ 2001.

ປະທານປະເທດ ແຫ່ງ ສປປ ລາວ

ຄຳໄຕ ສີພັນດອນ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 01/ສພຊ

ວັນທີ 10 ເມສາ 2001

# ກົດໝາຍ ວ່າດ້ວຍການອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ

## ໝວດທີ I ບົດບັນຍັດທົ່ວໄປ

### ມາດຕາ 1. ໜ້າທີ່ຂອງກົດໝາຍວ່າດ້ວຍ ການອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ

ກົດໝາຍວ່າດ້ວຍການອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ ມີໜ້າທີ່ກຳນົດ ຫລັກການ, ລະບຽບການ ແລະ ມາດຕະການຕ່າງໆກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບເພື່ອເຮັດໃຫ້ ພົນລະເມືອງ ມີສຸຂະພາບສົມບູນ, ມີຄຸນນະພາບຊີວິດທີ່ດີ ແລະ ມີອາຍຸຍືນ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດ ທະນາປະເທດຊາດ.

### ມາດຕາ 2. ນິຍາມຄຳສັບ

ສຸຂະພາບດີແມ່ນສະພາບທີ່ສົມບູນທັງດ້ານຮ່າງ ກາຍ, ຈິດໃຈແລະ ສັງຄົມຫາກບໍ່ແມ່ນພຽງແຕ່ສະພາບບໍ່ເປັນພະຍາດ ຫລື ບໍ່ພິການເທົ່ານັ້ນ. ການມີສຸຂະພາບດີ ແມ່ນກ້ອນທຶນອັນປະເສີດ, ເປັນສິດພື້ນຖານທີ່ຊອບທຳ ແລະ ເປັນພັນທະຂອງພົນລະເມືອງທຸກຄົນ, ທຸກຄອບຄົວ, ຂອງທົ່ວສັງຄົມ ແລະ ເປັນເງື່ອນໄຂພື້ນຖານອັນໜຶ່ງໃນການສຶກສາຮ່ຳຮຽນ,ອອກແຮງງານຜະລິດ ແລະ ດຳລົງຊີວິດຢ່າງມີຄວາມສຸກ.

ການອະນາໄມ ໝາຍເຖິງການຄວບຄຸມບັນດາອົງປະກອບຂອງສິ່ງແວດລ້ອມທີ່ເປັນອັນຕະລາຍ ຫລື ອາດຈະເປັນອັນຕະລາຍ ຕໍ່ສຸຂະພາບທັງດ້ານຮ່າງກາຍ, ຈິດໃຈ ແລະ ສັງຄົມ ຂອງ ມະນຸດ ເຊັ່ນ: ການອະນາໄມສ່ວນບຸກຄົນ, ການອະນາໄມການກິນ, ການຢູ່, ການນຸ່ງຫົ່ມ ແລະ ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງກົດໝາຍສະບັບນີ້.

ການກັນພະຍາດ ໝາຍເຖິງການນຳໃຊ້ມາດຕະການ ວິທີການຕ່າງໆ ທີ່ມີປະສິດທິຜົນ ເພື່ອກັນບໍ່ໃຫ້ພະຍາດເກີດຂຶ້ນ ຫລື ສະກັດກັ້ນ ບໍ່ໃຫ້ພະຍາດແຜ່ລາມ, ຫລຸດຜ່ອນຄວາມຮຸນແຮງ ແລະ ອັນຕະລາຍຂອງພະຍາດ.

ການສົ່ງເສີມສຸຂະພາບ ໝາຍເຖິງ ຂະບວນການເພີ່ມຄວາມຮູ້,ຄວາມສາມາດ, ສະຕິຕື່ນຕົວຂອງຄົນເຮົາໃນການຄວບຄຸມ, ດູແລ ແລະ ພັດທະນາສຸຂະພາບຕົນເອງ, ຄອບຄົວ, ລວມໝູ່ ແລະ ສັງຄົມ ໃຫ້ດີຂຶ້ນດ້ວຍການຫັນປ່ຽນ ການປະພຶດຂອງຕົນ, ສ້າງເງື່ອນໄຂອຳນວຍຄວາມສະດວກ ແລະ ວາງຫລັກການໃນການປະຕິບັດມາດຕະການຕ່າງໆ ເພື່ອປັບປຸງແບບແຜນດຳລົງຊີວິດທີ່ອຳນວຍແກ່ສຸຂະພາບທີ່ດີ ໂດຍເອົາວຽກງານສຸຂະສຶກສາເປັນໃຈກາງ.

ການສ່ຽງການເປັນອັນຕະລາຍ ຕໍ່ສຸຂະພາບ ໝາຍເຖິງ ການກະທຳ ຫລື ແບບແຜນດຳລົງຊີວິດ ທີ່ສາມາດເຮັດໃຫ້ຄົນເຈັບ ເປັນ ຫລື ເປັນພະຍາດ. ສຸຂະພາບຂອງພົນລະເມືອງຈະຮັບປະກັນໄດ້ກໍຕໍ່ເມື່ອການສ່ຽງການເປັນອັນຕະລາຍຕໍ່ສຸຂະພາບ ຫາກຖືກຫລີກເວັ້ນ, ຖືກຫລຸດຜ່ອນ ຫລື ກັນບໍ່ໃຫ້ເກີດຂຶ້ນ.

### ມາດຕາ 3. ສິດ ແລະ ພັນທະຂອງພົນລະເມືອງໃນການຮັກສາສຸຂະພາບ

ພົນລະເມືອງ ທຸກຄົນໂດຍບໍ່ຈຳແນກ ເຜົ່າ, ເພດ, ໄວ, ຖານະທາງດ້ານເສດຖະກິດ ແລະ ສັງຄົມ ລ້ວນແຕ່ມີສິດ ໄດ້ຮັບການບໍລິການ ດ້ານສຸຂະພາບ ແລະ ມີພັນທະ ໃນການຮັກສາສຸຂະພາບຂອງຕົນເອງ, ຄອບຄົວ, ສັງຄົມ ແລະ ປະເທດຊາດ, ປະກອບສ່ວນ ໃນວຽກງານອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ.

### ມາດຕາ 4. ຄວາມຮັບຜິດຊອບຂອງລັດຕໍ່ສຸຂະພາບຂອງພົນລະເມືອງ

ລັດໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ ຕໍ່ການຮັກສາ, ສົ່ງເສີມສຸຂະພາບ ຂອງປະຊາຊົນບັນດາເຜົ່າ ດ້ວຍການໃຫ້ຄວາມຮູ້, ຂໍ້ມູນຂ່າວສານ, ຊຸກຍູ້, ປຸກລະດົມຂົນຂວາຍ, ຂະຫຍາຍວຽກງານອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ ທັງພາກລັດ ແລະ ເອກະຊົນ, ສົ່ງເສີມໃຫ້ ຊຸມຊົນ, ເອກະຊົນ ມີສ່ວນຮ່ວມໃນການພັດທະນາ ລະບົບບໍລິການ ສາທາລະນະສຸກ ໃຫ້ທົ່ວເຖິງ ແລະ ມີຄຸນນະພາບດີ.

### ມາດຕາ 5. ການສົ່ງເສີມ ການລົງທຶນໃນວຽກງານອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ

ລັດ ສົ່ງເສີມໃຫ້ທຸກພາກສ່ວນເສດຖະກິດ, ສັງຄົມ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນໃສ່ວຽກງານອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ ດ້ວຍການວາງນະໂຍບາຍ, ລະບຽບການ, ມາດຕະການ ທີ່ເໝາະສົມຕາມລະບຽບ ກົດໝາຍ ຂອງສປປ ລາວ.

### ມາດຕາ 6. ການຮ່ວມມື ກັບ ສາກົນ

ລັດສົ່ງເສີມໃຫ້ມີການເປີດກ້ວາງການຮ່ວມມືກັບສາກົນ ກ່ຽວກັບການແລກປ່ຽນບົດຮຽນ, ການຝຶກອົບຮົມ, ການກໍ່ສ້າງພະນັກງານ, ການຊ່ວຍເຫລືອໃນຂົງເຂດອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ.

## ໝວດທີ II ການອະນາໄມ

### ມາດຕາ 7. ຄວາມໝາຍສຳຄັນ ຂອງການອະນາໄມ

ການອະນາໄມ ແມ່ນວຽກງານພື້ນຖານຂອງຂະແໜງການສາທາລະນະສຸກ ຊຶ່ງແນໃສ່ ກັນພະຍາດ ແລະ ສົ່ງເສີມສຸຂະພາບ ຂອງທົ່ວສັງຄົມ, ມີຄວາມໝາຍສຳຄັນ ໃນການດຳລົງຊີວິດປະຈຳວັນ ຂອງຄົນເຮົາ. ຮັກສາອະນາໄມໄດ້ດີ ຈະເຮັດໃຫ້ຄົນເຮົາບໍ່ເປັນພະຍາດ, ມີອາຍຸຍືນ, ມີ ຄຸນນະພາບຊີວິດທີ່ດີ.

ບຸກຄົນ, ຄອບຄົວ ແລະ ຊຸມຊົນ ຕ້ອງເອົາໃຈໃສ່ໃນການຮັກສາອະນາໄມຢ່າງເຂັ້ມງວດ.

### ມາດຕາ 8. ອົງປະກອບ ຂອງການອະນາໄມ

ການອະນາໄມປະກອບດ້ວຍການອະນາໄມສ່ວນບຸກຄົນ, ການອະນາໄມຄອບຄົວ, ການອະນາໄມຊຸມຊົນ, ການອະນາໄມນ້ຳດື່ມ ແລະ ນ້ຳໃຊ້, ການອະນາໄມອາຫານ ແລະ ເຄື່ອງບໍລິໂພກ, ການອະນາໄມເຄຫະສະຖານ, ການອະນາໄມໂຮງແຮມ ແລະ ເຮືອນພັກ, ການອະນາໄມໂຮງຮຽນ ແລະ ສະຖາບັນການສຶກສາ, ການອະນາໄມໂຮງໝໍ, ສຸກສາລາ ແລະ ຫ້ອງກວດພະຍາດ, ການອະນາໄມໃນການອອກແຮງງານ, ການອະນາໄມໃນການຜະລິດ, ການອະນາໄມສະຖານທີ່ກໍ່ສ້າງ ແລະ ສ້ອມແປງ, ການອະນາໄມ ສະຖານທີ່ສາທາລະນະ,ການ ອະນາໄມຕະຫລາດ, ການອະນາໄມໃນການຊາປະນະກິດສົບ , ການອະນາໄມສິ່ງແວດລ້ອມ ແລະ ອື່ນໆ.

### ມາດຕາ 9. ການອະນາໄມ ສ່ວນບຸກຄົນ

ການອະນາໄມ ສ່ວນບຸກຄົນ ໝາຍເຖິງ ການບຳລຸງຮັກສາຮ່າງກາຍ, ຈິດໃຈຂອງຕົນເອງ ບໍ່ໃຫ້ເຈັບເປັນ ຫລື ເກີດພະຍາດແລະ ສາມາດດຳລົງຊີວິດຢູ່ໃນສັງຄົມຢ່າງເປັນປົກະຕິ.

ທຸກຄົນຕ້ອງເອົາໃຈໃສ່ທຳຄວາມສະອາດ ຕົນເອງ, ກິນ, ດື່ມ, ຖ່າຍເທ, ນຸ່ງຫົ່ມ, ນອນ, ອອກແຮງງານ ແລະ ພັກຜ່ອນ ລວມທັງ ການມີເພດສຳພັນໃຫ້ຖືກຕ້ອງ ຕາມຫລັກການອະນາໄມ.

### ມາດຕາ 10. ການອະນາໄມ ຄອບຄົວ

ການອະນາໄມຄອບຄົວ ໝາຍເຖິງການເບິ່ງແຍງດູແລໃຫ້ສະມາຊິກທຸກຄົນໃນຄອບຄົວມີ ອະນາໄມ ແລະ ສຸຂະພາບດີ.

ແຕ່ລະຄອບຄົວ ຕ້ອງເອົາໃຈໃສ່ ສ້າງເງື່ອນໄຂໃຫ້ມີນ້ຳສະອາດດື່ມແລະໃຊ້, ມີອາຫານກິນທີ່ມີຄຸນ ຄ່າທາງດ້ານໂພຊະນາການ ແລະ ປອດໄພ, ມີວິດຖ່າຍ ຢ່າງຖືກຫລັກການອະນາໄມ, ມີເຄື່ອງນຸ່ງຫົ່ມທີ່ສະອາດ, ເໝາະສົມ, ນຳເອົາລູກຫລານໄປສັກຢາ ແລະຢອດຢາກັນພະຍາດ, ສົ່ງໄປກວດສຸຂະພາບ ແລະ ປິ່ນປົວເວລາເຈັບເປັນ,ຮັບປະກັນອະນາໄມສາມສະອາດ,ສຶກສາອົບຮົມກັນໃຫ້ຮູ້ຄວາມເປັນອັນຕະລາຍຂອງການສູບຢາ ແລະ ດື່ມເຫລົ້າ, ໃຫ້ຫລີກເວັ້ນການເສບຢາເສບຕິດ ແລະ ການຕິດຕໍ່ພະຍາດທາງເພດສຳພັນ.

### ມາດຕາ 11. ການອະນາໄມ ຊຸມຊົນ

ການອະນາໄມຊຸມຊົນ ໝາຍເຖິງການຮັກສາຄວາມສະອາດຈົບງາມຮ່ວມກັນພາຍໃນໜ່ວຍ, ຄຸ້ມ, ບ້ານ,ໃນເທດສະບານ ຫລື ຕົວເມືອງ.

ທຸກຄົນຢູ່ໃນຊຸມຊົນມີພັນທະຕ້ອງເອົາໃຈໃສ່ໃນການກຳຈັດຂີ້ເຫຍື້ອ ແລະ ນ້ຳເປິະເປື້ອນ, ຮັກສາອະ ນາໄມແຫລ່ງນ້ຳ, ນ້ຳດື່ມ, ນ້ຳໃຊ້, ອະນາໄມຖະໜົນຫົນທາງ, ຕະຄອງຮ່ອງນ້ຳ, ສະຖານທີ່ສາທາລະນະຕ່າງໆເພື່ອບໍ່ໃຫ້ເກີດພະຍາດ, ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ ແລະ ສວຍງາມ ເພື່ອສຸຂະພາບຂອງຕົນເອງ ແລະ ສັງຄົມ.

### ມາດຕາ 12. ການອະນາໄມນ້ຳດື່ມແລະນ້ຳໃຊ້

ການອະນາໄມນ້ຳດື່ມ ແລະ ນ້ຳໃຊ້ ໝາຍເຖິງການຈັດຫານ້ຳສະອາດເພື່ອດື່ມ ແລະ ນຳໃຊ້ປະຈຳວັນ.

ນ້ຳ ທີ່ນຳມາໃຊ້ປະຈຳວັນ ຕ້ອງໄດ້ມາຈາກແຫລ່ງນ້ຳເຊັ່ນ: ນ້ຳປະປາ, ນ້ຳສ້າງ, ນ້ຳຝົນ, ນ້ຳບາດານ, ນ້ຳລິນ, ນ້ຳອອກບໍ່, ບໍ່ນ້ຳອຸ່ນ, ແມ່ນ້ຳ, ລຳເຊ ແລະ ອື່ນໆ ຊຶ່ງນ້ຳເຫລົ່ານີ້ຕ້ອງຮັບປະກັນ ຄວາມສະອາດ.

ສຳລັບນ້ຳດື່ມ ຕ້ອງໄດ້ມາຈາກແຫລ່ງນ້ຳດັ່ງກ່າວແຕ່ຕ້ອງໄດ້ຜ່ານການຕົ້ມ, ການຕອງ, ການຜະລິດ ແລະ ການບໍລິການທີ່ຖືກຕ້ອງ ຕາມມາດຕະຖານເຕັກນິກ ແລະ ຮັບປະກັນຫລັກການອະນາໄມ ທີ່ກະຊວງສາທາລະນະສຸກ ວາງອອກ.

### ມາດຕາ 13. ການອະນາໄມ ອາຫານ ແລະ ເຄື່ອງບໍລິໂພກ

ການອະນາໄມ ອາຫານ ແລະ ເຄື່ອງບໍລິໂພກ ໝາຍເຖິງ ການຈັດຕັ້ງ ກວດກາ, ຄວບຄຸມອາຫານ ແລະ ເຄື່ອງບໍລິໂພກ ໃຫ້ສະອາດ ປອດໄພ ຈາກເຊື້ອພະຍາດ, ແມ່ກາຝາກ ແລະ ສານເຄມີທີ່ເປັນພິດຕ່າງໆ ຊຶ່ງເປັນອັນຕະລາຍຕໍ່ສຸຂະພາບ ແລະ ການຈະເລີນເຕີບໂຕຂອງຮ່າງກາຍ ໃນການດຳລົງຊີວິດ ຂອງຄົນ.

ບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນການປຸງແຕ່ງອາຫານ, ປຸງແຕ່ງຜະລິດຕະພັນອາຫານ, ຫຸ້ມຫໍ່, ເກັບຮັກສາ, ເຄື່ອນຍ້າຍ ແລະ ບໍລິການອາຫານຕ່າງໆ ຕ້ອງຮັບປະກັນຄຸນນະພາບໃຫ້ຖືກຕ້ອງຕາມມາດຕະຖານການຜະລິດ ແລະ ຮັບປະກັນຫລັກການອະນາໄມ.

ຜູ້ຈະຜະລິດ ຫລື ຂາຍອາຫານຕ້ອງໄດ້ກວດ ແລະ ຮັບການຢັ້ງຢືນສຸຂະພາບເສຍກ່ອນ, ຫ້າມຜູ້ທີ່ເປັນພະຍາດຕິດຕໍ່ ເຮັດວຽກກັບອາຫານ ເພື່ອບໍ່ໃຫ້ພະຍາດແຜ່ຂະຫຍາຍ.

ອາຫານ ແລະ ເຄື່ອງບໍລິໂພກທີ່ຜະລິດຢູ່ພາຍໃນ ຫລື ນຳເຂົ້າມາຈາກຕ່າງປະເທດຕ້ອງຜ່ານການກວດກາຈາກພາກສ່ວນທີ່ກ່ຽວຂ້ອງ ແລະ ໃຫ້ຖືກຕ້ອງຕາມຂໍ້ກຳນົດກົດໝາຍຂອງ ສປປ ລາວ.

## ມາດຕາ 14. ການອະນາໄມ ເຄຫະສະຖານ

ການອະນາໄມເຄຫະສະຖານໝາຍເຖິງການຮັກສາ ຄວາມສະອາດ ຈິບງາມ ແລະ ການຈັດສັນ ຄວາມເປັນລະບຽບຮຽບຮ້ອຍຂອງ ເຮືອນ, ສຳນັກງານ ຫ້ອງການ, ກ້ອງຕະລ່າງເຮືອນ, ອ້ອມແອ້ມເຮືອນຢູ່ ເພື່ອມີເຮືອນໄຊ ດຳລົງຊີວິດ ແລະ ເຮັດວຽກ ທີ່ປອດໄພ.

ສະຖານທີ່ຕັ້ງເຄຫະສະຖານ ຕ້ອງຢູ່ບ່ອນທີ່ສະອາດ ຮັບປະກັນຄວາມປອດໄພ ຈາກພະຍາດຕິດແປດ, ມົນລະພິດ ແລະ ເຫດລຳຄານ ອື່ນໆ.

ເພື່ອຮັບປະກັນໃຫ້ເຄຫະສະຖານ ມີຄວາມສະອາດຖືກຕ້ອງ ຕາມຫລັກການອະນາໄມພາຍໃນເຮືອນ, ສຳນັກງານ ຫ້ອງການ ຕ້ອງມີແສງສະຫວ່າງ ແລະ ອາກາດຖ່າຍເທ ຢ່າງພຽງພໍ, ຕ້ອງປັດກວາດ, ເຊັດຖູ ຢ່າງເປັນປົກກະຕິ, ໃຫ້ມີວິດຖ່າຍ, ມີຖັງ ຫລື ກະຕ່າໃສ່ຂີ້ເຫຍື້ອ, ມີຮ່ອງລະບາຍນ້ຳເປື້ອນ ຢ່າງຖືກຕ້ອງ ຕາມຫລັກການອະນາໄມ. ໃຫ້ກຳຈັດຂີ້ເຫຍື້ອ ແລະ ນ້ຳເປື້ອນ ຢ່າງເປັນປົກກະຕິ, ບໍ່ໃຫ້ມີຄອກສັດລ້ຽງຢູ່ກ້ອງຕະລ່າງເຮືອນ, ໃຫ້ຮັກສາສັດລ້ຽງ ຢູ່ໃນຄອກສະເພາະ, ບໍ່ປ່ອຍຕາມສະຖານທີ່ສາທາລະນະ ແລະ ມີບ່ອນເກັບມ້ຽນຮັກສາຜົນລະປູກ.

ບຸກຄົນ ແລະ ການຈັດຕັ້ງ ຕ້ອງມີຄວາມຮັບຜິດຊອບ ຕໍ່ການອະນາໄມເຄຫະສະຖານ, ເຮືອນ, ສຳນັກງານ ຫ້ອງການໃຫ້ມີຄວາມເປັນລະບຽບຮຽບຮ້ອຍ ຈິບງາມ ຢູ່ສະເໝີ.

## ມາດຕາ 15. ການອະນາໄມໂຮງແຮມ ແລະ ເຮືອນພັກ

ການອະນາໄມ ໂຮງແຮມ ແລະ ເຮືອນພັກ ໝາຍເຖິງ ການ ຮັກສາຄວາມສະອາດຈິບງາມ ແລະຄວາມເປັນລະບຽບຮຽບຮ້ອຍ ຂອງໂຮງແຮມ ແລະ ເຮືອນພັກ.

ສະຖານທີ່ຕັ້ງ ຂອງໂຮງແຮມ ແລະ ເຮືອນພັກ ຕ້ອງຢູ່ບ່ອນທີ່ເໝາະສົມ, ຮັບປະກັນຄວາມປອດ ໄພຈາກພະຍາດຕິດແປດ, ອຸປະຕິເຫດ, ເຫດລຳຄານ ແລະ ອັນຕະລາຍຕ່າງໆ.

ຫ້ອງນອນ ຕ້ອງມີບໍລິມາດພຽງພໍ ແລະ ເໝາະສົມກັບຈຳນວນຄົນ ທີ່ຈະມາພັກເຊົາ, ມີແສງສະຫວ່າງ, ມີອາກາດຖ່າຍເທ, ຈັດໃຫ້ມີວິດຖ່າຍຢ່າງພຽງພໍ ແລະຖືກຕ້ອງຕາມຫລັກການ ອະນາໄມ, ມີຫ້ອງອາບນ້ຳ, ອ່າງລ້າງໜ້າ, ມີຮ່ອງລະບາຍນ້ຳເປື້ອນ, ມີຖັງ ຫລື ກະຕ່າເກັບມ້ຽນຂີ້ເຫຍື້ອ, ມີການກຳຈັດຂີ້ເຫຍື້ອ, ນ້ຳເປື້ອນໃຫ້ຖືກຕ້ອງ ແລະຈັດຫານ້ຳດື່ມ, ນ້ຳໃຊ້ ຢ່າງພຽງພໍ.

ບຸກຄົນ ແລະ ການຈັດຕັ້ງ ຕ້ອງມີຄວາມຮັບຜິດຊອບ ໃນການຮັກສາ ຄວາມສະອາດຈິບງາມ, ຄວາມເປັນລະບຽບຮຽບຮ້ອຍຂອງໂຮງແຮມ ແລະ ເຮືອນພັກ, ປະຕິບັດຫລັກການອະນາໄມ ທີ່ລັດໄດ້ວາງອອກ.

## ມາດຕາ 16. ການອະນາໄມ ໂຮງຮຽນ ແລະ ສະຖາບັນການສຶກສາ

ການອະນາໄມ ໂຮງຮຽນ ແລະ ສະຖາບັນການສຶກສາ ໝາຍເຖິງການຮັກສາຄວາມສະອາດຈິບງາມ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງໂຮງຮຽນ ແລະ ສະຖາບັນການສຶກສາ.

ສະຖານທີ່ຕັ້ງຂອງໂຮງຮຽນ ແລະ ສະຖາບັນການສຶກສາ ຕ້ອງຮັບປະກັນຄວາມປອດໄພຈາກພະຍາດຕິດແປດ, ຈາກອຸປະຕິເຫດ ແລະ ອັນຕະລາຍຕ່າງໆ, ໃຫ້ມີບ່ອນຫລິ້ນກິລາ ແລະ ບ່ອນພັກຜ່ອນ.

ອາຄານຂອງໂຮງຮຽນ ແລະ ສະຖາບັນການສຶກສາ ຕ້ອງມີເນື້ອທີ່ພຽງພໍເໝາະສົມກັບຈຳນວນ ນັກຮຽນນັກສຶກສາ, ມີແສງສະຫວ່າງ, ມີອາກາດຖ່າຍເທຢ່າງພຽງພໍ, ມີໂຕະຕັ່ງທີ່ເໝາະສົມກັບໄວອາຍຸ ຂອງນັກຮຽນ.

ຄູ, ນັກຮຽນ ນັກສຶກສາ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງຕ້ອງຮັບປະກັນ ໃຫ້ໂຮງຮຽນ ແລະ ສະຖາບັນການສຶກສາສະອາດຢູ່ສະເໝີ, ຕ້ອງໃຫ້ມີນ້ຳດື່ມ, ນ້ຳໃຊ້ ແລະ ວິດຖ່າຍທີ່ສະອາດ ແລະ ຖືກຕ້ອງຕາມຫລັກການອະນາໄມ ແລະ ສິ່ງອຳນວຍຄວາມສະດວກທີ່ຈຳເປັນ. ນອກຈາກນັ້ນ ຕ້ອງຈັດຕັ້ງການກວດສຸຂະພາບໃຫ້ນັກຮຽນ ນັກສຶກສາ.

ສຳລັບເຮືອນລ້ຽງເດັກ ແລະ ໂຮງຮຽນອະນຸບານ ກໍໃຫ້ປະຕິບັດຕາມຫລັກການ ທີ່ກ່າວມານີ້ເຊັ່ນດຽວກັນ. ເດັກນ້ອຍ ນັກຮຽນອາຍຸຕ່ຳກວ່າ 5 ປີ ຕ້ອງໄດ້ສັກຢາ ແລະຢອດຢາກັນພະຍາດຢ່າງຄົບຊຸດ.

## ມາດຕາ 17. ການອະນາໄມ ໂຮງໝໍ, ສຸກສາລາ ແລະ ຫ້ອງກວດພະຍາດ

ການອະນາໄມ ໂຮງໝໍ, ສຸກສາລາ ແລະ ຫ້ອງກວດພະຍາດ ໝາຍເຖິງ ການຮັກສາຄວາມສະອາດຈົບງາມ ແລະ ຄວາມເປັນລະບຽບຮຽບຮ້ອຍ ຂອງສະຖານທີ່ບໍລິການກວດ, ບົ່ງມະຕິພະຍາດ, ປິ່ນປົວ, ຟື້ນຟູສຸຂະພາບ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ ໃຫ້ແກ່ປະຊາຊົນ.

ໂຮງໝໍ , ສຸກສາລາ ແລະ ຫ້ອງກວດພະຍາດ ຕ້ອງສະອາດງາມຕາ, ຮັບປະກັນ ຫລັກການອະນາໄມ, ປາສະຈາກການແຜ່ເຊື້ອພະຍາດຈາກຄົນເຈັບ, ຈາກເຄື່ອງມື, ເຄື່ອງໃຊ້ ແລະ ອຸປະກອນການແພດ.

ໂຮງໝໍ, ສຸກສາລາ ແລະ ຫ້ອງກວດພະຍາດ ຕ້ອງມີວິດຖ່າຍ, ມີນ້ຳດື່ມ ນ້ຳໃຊ້ຢ່າງພຽງພໍ, ມີລະບົບບຳບັດນ້ຳເປື້ອນ, ມີລະບົບແຍກປະເພດ, ບ່ອນເກັບມ້ຽນ ແລະ ກຳຈັດຂີ້ເຫຍື້ອ ໃຫ້ຖືກຕ້ອງຕາມຫລັກການອະນາໄມ.

## ມາດຕາ 18. ການອະນາໄມ ໃນການອອກແຮງງານ

ການອະນາໄມ ໃນການອອກແຮງງານ ໝາຍເຖິງ ການດູແລ, ເບິ່ງແຍງເງື່ອນໄຂຂອງການອອກແຮງງານ ແນໃສ່ປົກປັກຮັກສາ ສຸຂະພາບຂອງຜູ້ອອກແຮງງານ ໃນຂົງເຂດອຸດສາຫະກຳ, ກະສິກຳ, ຫັດຖະກຳ ແລະ ອື່ນໆ ເພື່ອບໍ່ໃຫ້ເປັນພະຍາດ, ຖືກສານເຄມີ, ກຳມັນຕະພາບລັງສີ ທີ່ເປັນອັນຕະລາຍຕໍ່ສຸຂະພາບ ຫລື ຊີວິດ ຂອງຜູ້ອອກແຮງງານ ແລະ ຄົນອ້ອມຂ້າງ.

ຜູ້ໃຊ້ແຮງງານ ຕ້ອງປະກອບອຸປະກອນ ປ້ອງກັນໄພແຮງງານ ໃຫ້ແກ່ຜູ້ອອກແຮງງານ ລວມທັງຮັບປະກັນ ຫລັກການອະນາໄມ ຂອງສະຖານທີ່ອອກແຮງງານ ເປັນຕົ້ນ ຕ້ອງໃຫ້ມີແສງສະຫວ່າງ ແລະ ມີອາກາດຖ່າຍເທຢ່າງພຽງພໍ, ມີອຸນຫະພູມ, ມີຄວາມປຽກຊຸ່ມ, ມີຄວາມສັ່ນສະເທືອນ, ມີສຽງດັງ, ມີກິ່ນ ແລະຂີ້ຝຸ່ນ ບໍ່ໃຫ້ເກີນມາດຕະຖານ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ.

ຜູ້ອອກແຮງງານ ຕ້ອງໄດ້ຮັບການກວດ, ປິ່ນປົວເບິ່ງແຍງ ສຸຂະພາບຕາມລະບຽບການ ຂອງກົດໝາຍແຮງງານ ເປັນຕົ້ນ ໃນຂະແໜງວຽກງານ ທີ່ເປັນອັນຕະລາຍຕໍ່ສຸຂະພາບ.

## ມາດຕາ 19. ການອະນາໄມ ໃນການຜະລິດ

ການອະນາໄມ ໃນການຜະລິດ ໝາຍເຖິງ ການຮັບປະກັນເງື່ອນໄຂ ແລະມາດຕະຖານ ການຜະລິດ ເຄື່ອງບໍລິໂພກ ແລະອຸປະໂພກ ໂດຍສະເພາະເຄື່ອງໃຊ້ສອຍປະຈໍາວັນ, ເຄື່ອງຫລິ້ນ ເດັກນ້ອຍ, ເຄື່ອງສໍາອາງ ເພື່ອໃຫ້ປາສະຈາກເຊື້ອພະຍາດ ແລະ ສານເຄມີຕົກຄ້າງ ທີ່ອາດຈະເປັນອັນຕະລາຍຕໍ່ສຸຂະພາບຂອງຜູ້ຊົມໃຊ້.

ບຸກຄົນ ແລະ ການຈັດຕັ້ງທີ່ທໍາການຜະລິດເຄື່ອງບໍລິໂພກ ແລະ ອຸປະໂພກທີ່ກ່າວມາຂ້າງເທິງນີ້ຕ້ອງຮັບປະກັນມາດຕະຖານເຕັກນິກການຜະລິດ, ເຕັກນິກຄວບຄຸມການກໍາຈັດສິ່ງເສດເຫລືອ ແລະ ຫລັກການອະນາໄມເພື່ອບໍ່ໃຫ້ເປັນອັນຕະລາຍແກ່ສຸຂະພາບຂອງຄົນ ແລະ ສິ່ງແວດລ້ອມ.

ຫ້າມຖິ້ມສິ່ງເສດເຫລືອ, ສານເຄມີ ຫລື ປ່ອຍນໍ້າເສຍຈາກໂຮງຈັກໂຮງງານ ລວມທັງບ່ອນຜະລິດຕ່າງໆໃສ່ແຫລ່ງນໍ້າ ຫລື ບ່ອນອື່ນໆ ໂດຍບໍ່ຜ່ານຂະບວນການຂອງການບໍາບັດ.

## ມາດຕາ 20. ການອະນາໄມ ສະຖານທີ່ກໍ່ສ້າງ ແລະ ສ້ອມແປງ

ການອະນາໄມ ສະຖານທີ່ກໍ່ສ້າງ ແລະ ສ້ອມແປງ ໝາຍເຖິງ ການປະຕິບັດມາດຕະການ ແລະ ວິທີການ ອັນຈໍາເປັນໃນການກໍ່ສ້າງຖະໜົນຫົນທາງ, ການປຸກສ້າງ ແລະການສ້ອມແປງເຄ ຫະສະຖານ ຫລືກິດຈະກໍາຕ່າງໆ ໃຫ້ຖືກຕ້ອງຕາມຫລັກການອະນາໄມ ເພື່ອຮັບປະກັນບໍ່ໃຫ້ເປັນໄພອັນຕະລາຍ ຕໍ່ສຸຂະພາບ ຫລື ຊີວິດຂອງຜູ້ອອກແຮງງານ, ຂອງປະຊາຊົນທີ່ຢູ່ໃກ້ຄຽງ ຫລື ຜູ້ສັນຈອນໄປມາ.

ເພື່ອຮັບປະກັນຄວາມປອດໄພ,ຄວາມສະອາດ ແລະ ຄວາມສະດວກ ຂອງສະຖານທີ່ກໍ່ສ້າງ ຫລື ສ້ອມແປງ, ເຈົ້າຂອງ ຫລື ຜູ້ຮັບຜິດຊອບສະຖານທີ່ກໍ່ສ້າງ ຫລື ສ້ອມແປງ ຕ້ອງມີປ້າຍສັນຍານເຕືອນ, ມີຮົ້ວອ້ອມ, ສິ່ງກັ້ງບັງ, ຜ້າປິດ, ຕາໜ່າງອ້ອມສະຖານທີ່ດັ່ງກ່າວໄວ້ ຫລື ຫົດນໍ້າ ເພື່ອບໍ່ໃຫ້ວັດຖຸກໍ່ສ້າງ, ສິ່ງເປິະເປື້ອນ ຫລື ຂີ້ຝຸ່ນຕົກ ຫລື ປິວອອກນອກສະຖານທີ່ກໍ່ສ້າງ ຫລື ສ້ອມແປງ.

## ມາດຕາ 21. ການ ອະນາໄມ ສະຖານທີ່ສາທາລະນະ

ການອະນາໄມ ສະຖານທີ່ສາທາລະນະ ໝາຍເຖິງ ການຮັກສາຄວາມສະອາດຈົບງາມ ແລະ ຄວາມເປັນລະບຽບຮຽບຮ້ອຍ ຂອງສະຖານທີ່ ຊຶ່ງຈັດໄວ້ເພື່ອຊຸມນຸມຊົນ, ການບັນເທີງ,ການ ພັກຜ່ອນຂອງມວນຊົນ ເຊັ່ນ: ວັດວາອາຮາມ, ປູສະນີຍະສະຖານ, ອະນຸ ສອນສະຖານ, ສວນສາທາລະນະ, ສະຖານທີ່ທ່ອງທ່ຽວ, ໂຮງມະໂຫລະສົບ, ສະໜາມກິລາ, ສະໜາມບິນ, ທ່າເຮືອ, ຕະຫລາດ, ສະຖານີຈອດລົດ, ຖະໜົນຫົນທາງ ແລະ ສະຖານທີ່ຈັດງານອື່ນໆ.

ບຸກຄົນ ແລະ ການຈັດຕັ້ງ ຕ້ອງມີຄວາມຮັບຜິດຊອບ ໃນການປະຕິບັດ ຕາມລະບຽບສະຖານທີ່ສາທາລະນະທີ່ວາງໄວ້ຢ່າງເຂັ້ມງວດ ແລະ ເຮັດໃຫ້ມີຄວາມສະອາດຈົບງາມ ແລະ ເປັນລະບຽບຮຽບຮ້ອຍຢູ່ສະເໝີ.

## ມາດຕາ 22. ການອະນາໄມ ຕະຫລາດ

ການອະນາໄມ ຕະຫລາດ ໝາຍເຖິງ ການປະຕິບັດມາດຕະການ ແລະ ວິທີການອັນຈຳເປັນ ກ່ຽວກັບຄວາມສະອາດ ປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງຕະຫລາດ ແນໃສ່ຮັບປະກັນຄວາມສະອາດ ຂອງສິນຄ້າແຕ່ລະປະເພດ ທີ່ເອົາມາວາງຂາຍ.

ສະຖານທີ່ຕັ້ງຂອງຕະຫລາດຕ້ອງຢູ່ບ່ອນເໝາະສົມ, ຫ່າງໄກຈາກແຫລ່ງເປິະເປື້ອນ, ປ່າຊ້າ ແລະບ່ອນລ້ຽງສັດ; ມີເນື້ອທີ່ກ້ວາງຂວາງ ແລະ ສັນຈອນໄປມາສະດວກ, ອາຄານໝັ້ນຄົງຖາວອນ, ມີແສງສະຫວ່າງພຽງພໍ, ມີອາກາດລ່ວງດີ, ມີລະບົບລະບາຍນ້ຳເປື້ອນ, ລະບົບເກັບມ້ຽນ ແລະ ກຳຈັດຂີ້ເຫຍື້ອ, ລະບົບປ້ອງກັນອັກຄີໄພ, ມີນ້ຳໃຊ້ ແລະ ວິດຖ່າຍສະອາດພຽງພໍ, ມີສະຖານທີ່ຈອດລົດທີ່ຮັບປະກັນ, ມີລະບົບຈັດວາງສິນຄ້າຕ່າງໆເຊັ່ນ: ອາຫານແຫ້ງ, ອາຫານສົດ, ເຄື່ອງໃຊ້ປະຈຳວັນ ແລະ ອື່ນໆ.

ບຸກຄົນ ແລະ ການຈັດຕັ້ງທີ່ນຳເອົາສິນຄ້າຕ່າງໆ ມາຂາຍໃນຕະຫລາດ ຕ້ອງມີຄວາມຮັບຜິດຊອບ ໃນການປະຕິບັດຫລັກການອະນາໄມ ທີ່ໄດ້ວາງອອກ.

## ມາດຕາ 23. ການອະນາໄມ ໃນການຊາປະນະກິດສົບ

ການອະນາໄມ ໃນການຊາປະນະກິດສົບ ໝາຍເຖິງ ການຮັກສາຫລັກການອະນາໄມຊາກສົບ ເພື່ອກັນບໍ່ໃຫ້ເຊື້ອພະຍາດແຜ່ຂະຫຍາຍ ນັບແຕ່ເວລາຮັກສາ, ເຄື່ອນຍ້າຍ, ຝັງ ຫລື ຈູດເຜົາຊາກສົບ.

ຊາກສົບຕ້ອງໃສ່ຢາ, ຫຸ້ມຫໍ່ ແລະໃສ່ຫີບເພື່ອບໍ່ໃຫ້ສິ່ງກິ່ນເໝັນ ຫລື ແຜ່ເຊື້ອພະຍາດ, ຫ້າມຮັກສາ ຊາກສົບ ຜູ້ທີ່ເປັນພະຍາດຕິດແປດໄວ້ດົນ. ໃນເວລາເຄື່ອນຍ້າຍ, ຈູດເຜົາ, ຝັງສົບ ຕ້ອງຮັບປະກັນຫລັກການອະນາໄມ, ຫ້າມຈູດເຜົາ ຫລື ຝັງຊາກສົບ ຢູ່ໃກ້ບ່ອນຊຸມນຸມຊົນ ຫລື ແຫລ່ງນ້ຳ

ການເຄື່ອນຍ້າຍຊາກສົບ ຫລື ອັດຖິຜ່ານຊາຍແດນຂອງສປປລາວ ຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ.

## ມາດຕາ 24. ການອະນາໄມ ສິ່ງແວດລ້ອມ

ການອະນາໄມສິ່ງແວດລ້ອມ ໝາຍເຖິງ ວິທີການທີ່ເຮັດໃຫ້ການພົວພັນລະຫວ່າງສິ່ງແວດລ້ອມ ກັບຄົນດີຂຶ້ນ ທາງດ້ານສຸຂະພາບຮ່າງກາຍ, ຈິດໃຈ ແລະ ສັງຄົມ.

ນອກຈາກການອະນາໄມ ທີ່ໄດ້ກ່າວໄວ້ຢູ່ຂ້າງເທິງນີ້ແລ້ວ, ບຸກຄົນ ແລະ ການຈັດຕັ້ງ ຍັງຕ້ອງເອົາໃຈໃສ່ ຮັບປະກັນ ການອະນາໄມສັດລ້ຽງ,ໂຮງຂ້າສັດ, ແມ່ນ້ຳລຳເຊ, ຄວບຄຸມມົນລະພິດ,ສັດ ແລະແມງໄມ້ນຳເຊື້ອພະຍາດ, ເຫດລຳຄານ ເຊັ່ນ: ກິ່ນ, ຄວັນ, ຝຸ່ນລະອອງ.

ບຸກຄົນ, ຄອບຄົວ, ລວມໝູ່ ແລະ ການຈັດຕັ້ງຕ້ອງປົກປັກຮັກສາ ແລະ ພັດທະນາການອະນາໄມສິ່ງແວດລ້ອມເພື່ອປົກປັກຮັກສາສຸຂະພາບຕົນເອງ ແລະ ຜູ້ອື່ນ.

ຫ້າມລ້ຽງ ແລະ ປ່ອຍສັດຕາມສະຖານທີ່ສາທາລະນະຕ່າງໆ. ບໍ່ໃຫ້ຖິ້ມຂີ້ເຫຍື້ອ, ຊາກສັດ, ສິ່ງເປິະເປື້ອນ ຫລື ສານເຄມີລົງໃສ່ແມ່ນ້ຳລຳເຊ, ໜອງນ້ຳ, ຖະໜົນຫົນທາງ ແລະ ຕ້ອງກຳຈັດ ຫລື ທຳລາຍແຫລ່ງເພາະພັນເຊື້ອພະຍາດ.

ການລະບາຍກິ່ນ, ຄວັນ, ຝຸ່ນລະອອງ ແລະ ການນໍາໃຊ້ແສງ, ສຽງ ແລະ ຄວາມສັ່ນສະເທືອນ ຕ້ອງໃຫ້ສອດຄ່ອງກັບມາດຕະຖານ ທີ່ກໍານົດໄວ້ໃນກົດໝາຍວ່າດ້ວຍ ການປົກປັກຮັກສາ ສິ່ງແວດລ້ອມ ເພື່ອບໍ່ໃຫ້ມີຜົນສະທ້ອນຕໍ່ສຸຂະພາບ.

## ໝວດທີ III ການກັນພະຍາດ

### ມາດຕາ 25. ຄວາມໝາຍສໍາຄັນ ຂອງການກັນພະຍາດ

ການກັນພະຍາດ ໝາຍເຖິງ ວຽກ, ການກະທໍາ, ມາດຕະການ ຫລື ວິທີການຕ່າງໆ ທີ່ມີຈຸດປະສົງສະກັດກັ້ນ ບໍ່ໃຫ້ພະຍາດເກີດຂຶ້ນ ຫລື ຖ້າເກີດຂຶ້ນຕ້ອງສະກັດກັ້ນບໍ່ໃຫ້ຮຸນແຮງແລະ ແຜ່ລາມ.

ລັດ ຖືເອົາວຽກງານກັນພະຍາດເປັນວຽກຕົ້ນຕໍ ແລະ ເປັນວຽກຂອງປວງຊົນທັງໝົດໝາຍຄວາມວ່າແມ່ນວຽກຂອງທົ່ວສັງຄົມ.

ທຸກຄົນ, ທຸກຄອບຄົວ, ທຸກຊຸມຊົນ, ທຸກການຈັດຕັ້ງຂອງສັງຄົມ ມີໜ້າທີ່ ແລະ ຄວາມຮັບຜິດຊອບປະກອບສ່ວນ ໃນວຽກງານກັນພະຍາດ ຢ່າງເປັນເຈົ້າການ ແລະ ຢ່າງຕັ້ງໜ້າ .

### ມາດຕາ26. ອົງປະກອບຂອງການກັນພະຍາດ

ການກັນພະຍາດ ປະກອບດ້ວຍວຽກງານດັ່ງລຸ່ມນີ້ :

1. ການກັນ ແລະ ຄວບຄຸມພະຍາດຕິດຕໍ່ ໝາຍເຖິງ ຕໍ່ບຸກຄົນ ແມ່ນສະກັດກັ້ນບໍ່ໃຫ້ພະຍາດເກີດຂຶ້ນ, ຕໍ່ຊຸມຊົນ ແມ່ນບໍ່ໃຫ້ພະຍາດຕິດຕໍ່ແຜ່ລາມ ຈາກບຸກຄົນຫນຶ່ງໄປຫາບຸກຄົນອື່ນ, ຈາກສັດໄປຫາຄົນ ແລະຈາກບ່ອນຫນຶ່ງໄປຫາອີກບ່ອນຫນຶ່ງ.

ບຸກຄົນ, ຄອບຄົວ, ອໍານາດການປົກຄອງ ແລະທຸກການຈັດຕັ້ງ ໃນສັງຄົມ ຕ້ອງປະຕິບັດຕາມຫລັກການກັນ ແລະ ຄວບຄຸມພະຍາດຕິດຕໍ່. ເມື່ອມີປະກົດການຕ່າງໆ ທີ່ມີລັກສະນະລະບາດຂອງພະຍາດ ຢູ່ໃນທ້ອງຖິ່ນຂອງຕົນ ຕ້ອງຮີບຮ້ອນ ວາງມາດຕະການແກ້ໄຂ ແລະ ລາຍງານໃຫ້ການຈັດຕັ້ງຂັ້ນເທິງຊາບໂດຍດ່ວນ ເພື່ອແກ້ໄຂທັນເວລາ.

2. ການສັກ ຫລື ຢອດຢາກັນພະຍາດ ໝາຍເຖິງ ການສ້າງຄວາມຕ້ານທານ ໃຫ້ແກ່ຮ່າງກາຍຂອງປະຊາຊົນບັນດາເຜົ່າ ດ້ວຍການນໍາໃຊ້ວັກແຊງຊະນິດສັກ ແລະ ຢອດ ເພື່ອກັນພະຍາດຄໍຕີບ, ບາດທະຍັກ, ໄອໄກ່, ເປ້ຍລ່ອຍ(ໂປລີໂອ), ວັນນະໂລກ, ພະຍາດໝາກແດງ ແລະ ພະຍາດ ອື່ນໆ.

ແມ່ຍິງ ແລະ ເດັກນ້ອຍທຸກຄົນ ຕ້ອງໄດ້ສັກຢາ ແລະ ຢອດຢາກັນພະຍາດ ຕາມກໍານົດເວລາ, ຕາມສະຖານທີ່ ແລະ ຕາມລະບຽບການທີ່ໄດ້ກໍານົດໄວ້.

3. ການກັນພະຍາດ ບໍ່ຕິດຕໍ່ ໝາຍເຖິງ ການປະພຶດ ຫລື ດໍາລົງຊີວິດທີ່ເໝາະສົມ ເພື່ອບໍ່ໃຫ້ເກີດພະຍາດ ບໍ່ຕິດຕໍ່ ຕົວຢ່າງ ບໍ່ສູບຢາ ເພື່ອບໍ່ໃຫ້ເປັນການສ່ຽງຕໍ່ການເປັນພະຍາດມະເຮັງປອດ, ບໍ່ດື່ມເຫລົ້າເກີນຂອບເຂດ ເພື່ອຫລີກເວັ້ນການເປັນພະຍາດ ແລະ ອຸປະຕິເຫດ, ຕ້ອງຫັດກາຍະບໍລິຫານ ແລະ ຫລິ້ນກິລາ ເພື່ອຫລີກເວັ້ນພະຍາດຫົວໃຈ ແລະ ພະຍາດອື່ນໆ.

## ໝວດທີ IV ການສົ່ງເສີມສຸຂະພາບ

### ມາດຕາ 27. ຄວາມໝາຍສຳຄັນ ຂອງການສົ່ງເສີມສຸຂະພາບ

ການສົ່ງເສີມສຸຂະພາບ ເປັນນະໂຍບາຍພື້ນຖານຂອງລັດ ແນໃສ່ ສ້າງສະພາບແວດລ້ອມ ທີ່ອຳນວຍ ຄວາມສະດວກ ໃຫ້ໝົດທຸກຄົນ ມີສຸຂະພາບດີ.

ພົນລະເມືອງທຸກຄົນມີໜ້າທີ່ແລະຄວາມຮັບຜິດຊອບໃນການເຮັດໃຫ້ສຸຂະພາບຂອງຕົນເອງແຂງແຮງດີ.

ທຸກຂະແໜງການຕ້ອງປະກອບສ່ວນ ກັບຂະແໜງການ ສາທາລະນະສຸກໃນການຊຸກຍູ້ ແລະ ສ້າງເງື່ອນໄຂອຳນວຍ ຄວາມສະດວກໃຫ້ແກ່ວຽກງານສົ່ງເສີມສຸຂະພາບໃນທົ່ວປວງຊົນ.

### ມາດຕາ 28. ອົງປະກອບ ຂອງການສົ່ງເສີມສຸຂະພາບ

ການສົ່ງເສີມສຸຂະພາບ ປະກອບດ້ວຍການສຸຂະສຶກສາ, ການຮັກສາສຸຂະພາບແມ່ ແລະ ເດັກ, ການຮັກສາສຸຂະພາບໄວໜຸ່ມ ແລະ ໄວຈະເລີນພັນ, ການຮັກສາສຸຂະພາບຜູ້ສູງອາຍຸ, ຜູ້ເສຍອົງຄະ ແລະ ຄົນພິການ, ການໂພຊະນາການ, ການກິລາ, ກາຍະບໍລິຫານ ແລະ ສິລະປະ, ການຈັດສວນສາທາລະນະ, ເຂດຂຽວໃນຕົວເມືອງ ແລະສະຖານທີ່ພັກຜ່ອນ ໃນບ່ອນທີ່ມີເງື່ອນໄຂ.

### ມາດຕາ 29. ການສຸຂະສຶກສາ

ການສຸຂະສຶກສາ ໝາຍເຖິງ ຂະບວນການສຶກສາອົບຮົມໃຫ້ຂໍ້ມູນ, ຂ່າວສານ ແລະ ຄວາມຮູ້ກ່ຽວກັບສຸຂະພາບ ແກ່ພົນ ລະເມືອງທຸກຄົນ ເພື່ອໃຫ້ເຂົ້າໃຈ ແລະມີສະຕິໃນການຮັກສາອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ ທີ່ກໍ່ໃຫ້ເກີດການປ່ຽນແປງທາງດ້ານແນວຄິດ, ການກະທຳ ແລະ ແບບແຜນການດຳລົງຊີວິດສ່ວນບຸກຄົນ, ຄອບຄົວ ແລະ ຊຸມຊົນ ແນໃສ່ເຮັດໃຫ້ປະຊາຊົນ ມີສຸຂະພາບແຂງແຮງດີ.

ການຈັດຕັ້ງ ສາທາລະນະສຸກ, ສຶກສາ, ວັດທະນະທຳຖະແຫລງຂ່າວ, ສື່ມວນຊົນ ແລະ ການຈັດຕັ້ງອື່ນໆ ໃນສັງຄົມທັງພາກລັດ ແລະ ເອກະຊົນ ມີຄວາມຮັບຜິດຊອບໃນການສຶກສາອົບຮົມ ໃຫ້ຄວາມຮູ້ກ່ຽວກັບສຸຂະສຶກສາ ແກ່ປະຊາຊົນຢ່າງເປັນປົກກະຕິ ແລະ ຫລາຍຮູບຫລາຍສີ.

ຕ້ອງເອົາ ການສຸຂະສຶກສາ ເຂົ້າສິດສອນຢູ່ໃນໂຮງຮຽນ.

### ມາດຕາ 30. ການຮັກສາສຸຂະພາບແມ່ ແລະ ເດັກ

ການຮັກສາສຸຂະພາບແມ່ ແລະ ເດັກ ແມ່ນນະໂຍບາຍທີ່ສຳຄັນຂອງລັດ ແລະ ເປັນວຽກງານໃຈກາງອັນໜຶ່ງ ຂອງຂະແໜງການສາທາລະນະສຸກ ທັງເປັນພັນທະຂອງໝົດທຸກຄົນ ໂດຍສະເພາະຜູ້ເປັນພໍ່ຂອງເດັກ.

ແມ່ຍິງ ແລະ ເດັກນ້ອຍທຸກຄົນ ມີສິດໄດ້ຮັບການບໍລິການດ້ານສຸຂະພາບຕາມນະໂຍບາຍຂອງລັດ ຊຶ່ງປະກອບດ້ວຍ ການອະນາໄມ, ກັນພະຍາດ, ສົ່ງເສີມສຸຂະພາບ, ປິ່ນປົວ ແລະ ຟື້ນຟູສຸຂະພາບໃນເວລາກ່ອນແຕ່ງງານ, ຖືພາ, ອອກລູກ ແລະ ຫລັງ ອອກລູກ, ສຳລັບເດັກ ຕ້ອງໄດ້ຮັບການ

ລ້ຽງດູເບິ່ງແຍງ ບົວລະບັດໃນທຸກກໍລະນີ ນັບທັງເດັກຝາແຝດ ແລະເດັກເກີດບໍ່ປົກກະຕິ ຕັ້ງແຕ່ເກີດຈົນເຖິງໄວຮຽນ, ໄວໜຸ່ມ ແລະ ໄວຈະເລີນພັນ ເພື່ອໃຫ້ແມ່ ແລະ ເດັກມີສຸຂະພາບສົມບູນ ທາງດ້ານຮ່າງກາຍ, ຈິດໃຈ, ອາລົມ ແລະ ສັງຄົມ.

ແມ່ຍິງໃນໄວໜຸ່ມ ແລະ ໄວຈະເລີນພັນຕ້ອງກວດສຸຂະພາບ ແລະ ສັກຢາກັນພະຍາດ ຕາມລະບຽບການ. ໃນເວລາຖືພາຕ້ອງມີການກວດ, ຝາກທ້ອງ, ຕິດຕາມສຸຂະພາບຂອງເດັກ ທີ່ຢູ່ໃນທ້ອງ ຖ້າກວດເຫັນການສ່ຽງ ຕ້ອງມີແຜນການແກ້ໄຂລ່ວງໜ້າ, ບໍ່ໃຫ້ເຮັດວຽກໜັກ. ກ່ອນ ແລະຫລັງອອກລູກ ຕ້ອງໄດ້ຮັບການພັກຜ່ອນ ຕາມຄວາມເໝາະສົມ ແລະຕາມລະບຽບກົດໝາຍ. ໃນເວລາອອກລູກຕ້ອງໄປອອກຢູ່ໂຮງໝໍ, ຢູ່ສຸກສາລາ ຫລື ຢູ່ເຮືອນ ແລະໃຫ້ມີແພດ ຫລື ໝໍຕໍາແຍກໍາກັບເບິ່ງແຍງນໍາ. ເວລາຖືພາ ແລະ ຢູ່ກໍາແມ່ຕ້ອງໄດ້ຮັບການບໍາລຸງກິນອາຫານຢ່າງພຽງພໍ.

ເດັກນ້ອຍເກີດໃໝ່ ຕ້ອງໄດ້ຮັບການລ້ຽງດູດ້ວຍນົມແມ່ເປັນຕົ້ນຕໍ ພ້ອມສັກ ແລະ ຢອດຢາກັນພະຍາດໃຫ້ຄົບຊຸດ.

ເພື່ອຮັບປະກັນສຸຂະພາບຂອງແມ່ ຄວນມີລູກຫ່າງ.

### ມາດຕາ 31. ການຮັກສາສຸຂະພາບໄວໜຸ່ມ ແລະ ໄວຈະເລີນພັນ

ໄວໜຸ່ມ ແລະ ໄວຈະເລີນພັນ ແມ່ນໄວກໍາລັງ ຈະເລີນເຕີບ ໂຕທາງດ້ານຮ່າງກາຍ ແລະ ມັນສະໝອງ. ການຮັກສາສຸຂະພາບຂອງໄວໜຸ່ມ ແລະ ໄວຈະເລີນພັນ ເປັນສິ່ງສໍາຄັນ ທີ່ເຮັດໃຫ້ ຊາວໜຸ່ມ ແລະ ໄວຈະເລີນພັນ ມີສຸຂະພາບສົມບູນ ທັງດ້ານຮ່າງກາຍ, ມັນສະໝອງ ແລະຈິດໃຈ.

ໄວໜຸ່ມ ແລະ ໄວຈະເລີນພັນຕ້ອງໄດ້ຮັບການສຶກສາ ອົບຮົມ ແນວຄິດ, ການເມືອງ ແລະ ຄຸນສົມບັດ,ໄດ້ຮັບການ ສົ່ງເສີມທາງດ້ານການສຶກສາ, ກິລາ ກາຍະບໍລິຫານ, ສິລະປະ, ວັນນະຄະດີ ແລະ ວັດທະນະທໍາ.

ຕ້ອງເອົາໃຈໃສ່ ສຶກສາອົບຮົມໄວໜຸ່ມ, ໄວຈະເລີນພັນຮູ້ ແລະ ເຂົ້າໃຈນະໂຍບາຍເກີດລູກຫ່າງ ແລະ ຄວາມປອດໄພ ຂອງການມີເພດສໍາພັນ, ຂອງການຖືພາ ແລະ ອອກລູກ, ບໍ່ສ້າງຄອບຄົວກ່ອນອາຍຸກະສຽນ.

ຄອບຄົວ, ໂຮງຮຽນ, ການຈັດຕັ້ງວິຊາຊີບສັງຄົມ ທັງພາກລັດ ແລະ ເອກະຊົນລ້ວນແຕ່ຕ້ອງເອົາໃຈໃສ່ ສຶກສາອົບຮົມ ແລະສົ່ງເສີມໄວໜຸ່ມ ແລະ ໄວຈະເລີນພັນ ກ່ຽວກັບບັນຫາທີ່ກ່າວມາຂ້າງເທິງນີ້ ພ້ອມກັນນັ້ນ ຕ້ອງສຶກສາອົບຮົມ ໃຫ້ຫລີກເວັ້ນການສູບຢາ, ການດື່ມເຫລົ້າ, ການ ດົມກາວ, ການເສບຢາເສບຕິດ, ການເປັນນັກເລງອັນຕະພານ ແລະ ອື່ນໆ.

### ມາດຕາ 32. ການຮັກສາສຸຂະພາບຜູ້ສູງອາຍຸ, ຜູ້ເສຍອົງຄະ ແລະ ຄົນພິການ

ຜູ້ສູງອາຍຸ, ຜູ້ເສຍອົງຄະ ແລະ ຄົນພິການ ແມ່ນຜູ້ທີ່ມີເຫື່ອແຮງ ແລະ ກໍາລັງວັງຊາຄ່ອຍຫລຸດໜ້ອຍຖອຍລົງ ແລະ ສຸຂະພາບບໍ່ສົມບູນ, ດ້ວຍເຫດນັ້ນ ຈຶ່ງມີຄວາມຈໍາເປັນຕ້ອງໄດ້ຮັບການຕິດຕາມ ເບິ່ງແຍງສຸຂະພາບຢ່າງໃກ້ຊິດ.

ຄອບຄົວ, ການຈັດຕັ້ງ ແລະສັງຄົມຕ້ອງເອົາໃຈໃສ່ເບິ່ງແຍງສຸຂະພາບຜູ້ສູງອາຍຸ, ຜູ້ທີ່ມີຄຸນງາມຄວາມດີຕໍ່ປະເທດຊາດ, ວິລະຊົນ, ນັກຮົບແຂ່ງຂັນ, ຜູ້ເສຍອົງຄະ, ຄົນພິການ, ຜູ້ເປັນບ້າເສຍຈິດ

ດ້ວຍການບໍລິການກວດສຸຂະພາບ, ການປິ່ນປົວເບິ່ງແຍງຢ່າງເໝາະສົມ, ສ້າງເງື່ອນໄຂ ໃຫ້ຜູ້ສູງອາຍຸ, ຜູ້ເສຍອົງຄະ ແລະ ຄົນພິການໄດ້ດໍາລົງຊີວິດ ແລະ ພັກຜ່ອນຢ່າງເໝາະສົມປະກອບສ່ວນເຂົ້າໃນວຽກງານສັງຄົມ.

### ມາດຕາ 33. ການໂພຊະນາການ

ການໂພຊະນາການ ໝາຍເຖິງ ການກິນອາຫານທີ່ມີປະໂຫຍດ ແລະ ປອດໄພ ເພື່ອໃຫ້ຮ່າງກາຍ ແລະ ມັນສະໝອງຈະເລີນເຕີບໂຕດີ. ເພື່ອຮັບປະກັນໃຫ້ມີສຸຂະພາບເຂັ້ມແຂງດີ ຄວນສົ່ງເສີມໃຫ້ແຕ່ລະຄົນກິນອາຫານ ໃຫ້ຄົບໝວດ ຄື ທາດໂປຼຕີອີນ (ຊີ້ນ,ປາ,ຖົ່ວເຫລືອງ...), ທາດແປ້ງ, ທາດນ້ຳຕານ, ທາດໄຂມັນ ແລະ ທາດເກືອແຮ່ ( ຜັກແລະໝາກໄມ້ ). ຫ້າມກິນອາຫານ ທີ່ຈະເປັນອັນຕະລາຍ ຕໍ່ສຸຂະພາບ ເຊັ່ນ: ກິນສັດທີ່ເປັນພະຍາດ, ອາຫານບູດເນົ່າ, ອາຫານທີ່ມີສານເຄມີເປັນພິດ.

### ມາດຕາ 34. ກິລາ, ກາຍະບໍລິຫານ ແລະ ສິລະປະ

ກິລາ, ກາຍະບໍລິຫານ ແລະ ສິລະປະມີຄວາມສໍາຄັນສໍາ ລັບທຸກເພດທຸກໄວ ເພື່ອສົ່ງເສີມໃຫ້ໝົດທຸກຄົນ ມີສຸຂະພາບແຂງແຮງ, ມີອາຍຸຍືນ, ມີຄວາມເບີກບານມ່ວນຊື່ນ ແລະ ສ້າງພູມຕ້ານທານໃຫ້ຮ່າງກາຍ.

ລັດຕ້ອງສ້າງເງື່ອນໄຂຈັດຕັ້ງໃຫ້ທຸກພາກສ່ວນ ປະກອບສ່ວນຫລິ້ນກິລາ, ຫັດກາຍະບໍລິຫານ ແລະ ສະແດງສິລະປະໃນຫລາຍປະເພດ, ຫລາຍຮູບການ ແລະ ຫລາຍລະດັບ.

ຕ້ອງເອົາວຽກງານກິລາ, ກາຍະບໍລິຫານ ແລະ ສິລະປະເຂົ້າໃນຫລັກສູດການສິດສອນຂອງໂຮງຮຽນຢູ່ລະຂັ້ນ.

### ມາດຕາ 35. ສວນສາທາລະນະ, ເຂດຂຽວ ແລະ ສະຖານທີ່ພັກຜ່ອນ

ເພື່ອຮັບປະກັນ ໃຫ້ມີການສົ່ງເສີມສຸຂະພາບຢ່າງທົ່ວເຖິງ, ມີຄວາມຈໍາເປັນ ທີ່ຈະຕ້ອງສ້າງສວນສາທາລະນະ, ເຂດຂຽວ ແລະສະຖານທີ່ພັກຜ່ອນ.

ບ້ານ, ເມືອງ, ແຂວງ, ກໍາແພງນະຄອນ, ເຂດພິເສດ, ສໍານັກງານອົງການ ແລະ ບ່ອນທີ່ມີຊຸມຊົນໜາແໜ້ນ ຄວນຈັດໃຫ້ມີສວນສາທາລະນະ, ມີການອະນຸລັກ ແລະ ປູກຕົ້ນໄມ້ຫລາຍ ເພື່ອໃຫ້ມີອາກາດສົດຊື່ນຊຸ່ມເຢັນ ແລະ ຕ້ອງໃຫ້ມີສະຖານທີ່ພັກຜ່ອນເພື່ອຟື້ນຟູສຸຂະພາບ.

## ໝວດທີ V ການຊຸກຍູ້ ຈັດຕັ້ງ ປະຕິບັດວຽກງານອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ

### ມາດຕາ36. ການຊຸກຍູ້ການຈັດຕັ້ງປະຕິບັດວຽກງານອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ

ການອະນາໄມ ກັນພະຍາດ ແລະ ສົ່ງເສີມສຸຂະພາບ ເປັນວຽກງານພື້ນຖານ, ໃຈກາງ ແລະ ບຸລິມະສິດຂອງສາທາລະນະສຸກ ຊຶ່ງມີຄວາມຈໍາເປັນຕ້ອງໄດ້ຮັບການຊຸກຍູ້, ສົ່ງເສີມດ້ວຍ ການປະ

ກອບສ່ວນຈາກບຸກຄົນ, ການຈັດຕັ້ງທັງພາກລັດ ແລະ ເອກະຊົນ ເພື່ອຕອບສະໜອງ ຄວາມຮຽກຮ້ອງຕ້ອງການຂອງສັງຄົມ ກ່ຽວກັບການອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ.

### ມາດຕາ 37. ການລົງທຶນ

ລັດ ສົ່ງເສີມໃຫ້ພາກສ່ວນເສດຖະກິດ-ສັງຄົມຕ່າງໆ ທັງພາຍໃນ ແລະ ຕ່າງປະເທດລົງທຶນໃສ່ຂົງເຂດອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ ດ້ວຍຮູບການຕ່າງໆເຊັ່ນ: ການກໍ່ສ້າງ ແລະ ດໍາເນີນກອງທຶນໝູນວຽນ ຈັດຫານໍ້າສະອາດ, ກອງທຶນວິດຖ່າຍ, ກອງທຶນມຸ້ງຍ້ອມຢາ, ສະຖານທີ່ພັກ ແລະ ອື່ນໆ.

### ມາດຕາ 38. ການປະກອບສ່ວນ ຂອງສັງຄົມ

ທຸກຄົນ ແລະ ທຸກການຈັດຕັ້ງມີໜ້າທີ່ປະກອບສ່ວນໃນວຽກງານອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ ປະກອບສ່ວນດ້ວຍເຫື່ອແຮງ, ທຶນຮອນ ແລະສະຕິປັນຍາໃນການສ້າງ ສະຖານທີ່ພັກຜ່ອນ, ສົ່ງເສີມກິລາ ກາຍະບໍລິຫານ ແລະ ສິລະປະ, ສ້າງສວນສາທາລະນະ, ເຂດຂຽວ ແລະຈັດຕັ້ງມູນນິທິເພື່ອສຸຂະພາບ ລວມທັງເຂົ້າຮ່ວມການເຄື່ອນໄຫວຕ່າງໆ ທີ່ກ່າວມາຂ້າງເທິງນີ້.

### ມາດຕາ 39. ການຄົ້ນຄ້ວາວິທະຍາສາດ

ການຄົ້ນຄ້ວາວິທະຍາສາດກ່ຽວກັບວຽກງານອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບແມ່ນການຊອກຫາຂໍ້ມູນ ກ່ຽວກັບສາເຫດຂອງການເຈັບເປັນ, ເປັນພະຍາດ, ສິ່ງທີ່ສ່ຽງ ການເປັນອັນຕະລາຍຕໍ່ສຸຂະພາບ ລວມທັງມາດຕະການກັນ, ຈໍາກັດ ແລະ ແກ້ໄຂສາເຫດດັ່ງກ່າວ.

ການຄົ້ນຄ້ວາວິທະຍາສາດ ກ່ຽວກັບວຽກງານອະນາໄມ,ກັນພະຍາດ ແລະ ສົ່ງເສີມສຸຂະພາບຕ້ອງໄດ້ຮັບອະນຸຍາດ ຈາກກະຊວງສາທາລະນະສຸກ ພ້ອມທັງລາຍງານຜົນຂອງການຄົ້ນຄ້ວາທົດລອງ.

## ໝວດທີ VI ການຄຸ້ມຄອງ ແລະ ກວດກາວຽກງານ ອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ

### ມາດຕາ40. ອົງການຄຸ້ມຄອງແລະກວດກາວຽກງານອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ

ອົງການຄຸ້ມຄອງ ແລະ ກວດກາວຽກງານອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບປະກອບດ້ວຍ:

1. ຂະແໜງການສາທາລະນະສຸກ ປະກອບດ້ວຍ :
- ກະຊວງສາທາລະນະສຸກ ;
- ພະແນກສາທາລະນະສຸກແຂວງ, ກໍາແພງ ນະຄອນ ແລະ ເຂດພິເສດ;
- ຫ້ອງການສາທາລະນະສຸກເມືອງ.
2. ຂະແໜງການທີ່ກ່ຽວຂ້ອງອື່ນໆ.

ເພື່ອຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ໄດ້ຮັບນັ້ນ ຕ້ອງສ້າງຕັ້ງຄະນະກຳມະການ ເພື່ອສຸຂະພາບຂັ້ນແຂວງ, ເມືອງ, ບ້ານ ຂຶ້ນ ຊຶ່ງປະກອບດ້ວຍບຸກຄະລາກອນຈຳນວນໜຶ່ງ ເພື່ອຊ່ວຍໃນການຄຸ້ມຄອງການເຄື່ອນໄຫວວຽກງານ ອະນາໄມ, ກັນພະຍາດ ແລະສົ່ງເສີມສຸຂະພາບ.

### ມາດຕາ41. ສິດ ແລະໜ້າທີ່ຂອງອົງການຄຸ້ມຄອງ ແລະກວດກາວຽກງານອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ

ຂະແໜງການສາທາລະນະສຸກ ໂດຍແມ່ນກະຊວງສາທາລະນະສຸກ ໃນຖານະເປັນອົງການຄຸ້ມຄອງ ມະຫາພາກ ມີສິດ ແລະ ໜ້າທີ່ ກຳນົດ ນະໂຍບາຍ, ວາງແຜນ, ສ້າງຂໍ້ກຳນົດ ກົດລະບຽບ ແລະ ມາດຕະຖານເຕັກນິກ ທີ່ຈຳເປັນ, ຊີ້ນຳ ທຸກຂັ້ນໃນຂະແໜງການຂອງຕົນ ເພື່ອຈັດຕັ້ງປະຕິບັດ ໂດຍປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ, ກວດກາຕິດຕາມ, ປະເມີນຜົນ ການຈັດຕັ້ງປະຕິບັດ ວຽກງານອະນາໄມ, ກັນພະຍາດ ແລະສົ່ງເສີມສຸຂະພາບ ໃນແຕ່ລະໄລຍະໃຫ້ມີປະສິດທິຜົນໃນຂອບເຂດທົ່ວປະເທດ, ຮັບປະກັນໃຫ້ກົດໝາຍ ແລະລະບຽບການຕ່າງໆກ່ຽວກັບວຽກງານອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ ໄດ້ຮັບການຈັດຕັ້ງປະຕິບັດຢ່າງຖືກຕ້ອງທົ່ວເຖິງ ແລະ ເຂັ້ມງວດ.

ຂະແໜງການ ທີ່ກ່ຽວຂ້ອງອື່ນໆ ມີໜ້າທີ່ປະກອບສ່ວນ ຈັດຕັ້ງປະຕິບັດວຽກງານອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບໃຫ້ມີປະສິດທິຜົນ.

ຄະນະກຳມະການ ເພື່ອສຸຂະພາບແຕ່ລະຂັ້ນ ມີໜ້າທີ່ຈັດຕັ້ງປະຕິບັດວຽກງານອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ ຕາມພາລະບົດບາດທີ່ຖືກມອບໝາຍ.

### ມາດຕາ 42. ການກວດກາ ວຽກງານອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ

ການກວດກາ ວຽກງານອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ ແມ່ນການຕິດຕາມກວດກາ ການເຄື່ອນໄຫວ ກ່ຽວກັບການປະຕິບັດ ຫລັກການອະນາໄມ, ສິ່ງທີ່ສ່ຽງການເປັນອັນຕະລາຍຕໍ່ສຸຂະພາບ, ການຮັກສາຄວາມສະອາດ, ການຄວບຄຸມມົນລະພິດ ແລະ ການປະຕິບັດມາດຕະການ ໃຫ້ຖືກຕ້ອງ ຕາມລະບຽບກົດໝາຍ ເພື່ອແນໃສ່ ເຮັດໃຫ້ວຽກງານອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ ດຳເນີນໄປ ຢ່າງມີປະສິດທິຜົນ.

### ມາດຕາ 43. ປະເພດ ການກວດກາ

ການກວດກາວຽກງານອະນາໄມ, ກັນພະຍາດ ແລະສົ່ງເສີມສຸຂະພາບມີ ສາມປະເພດ ດັ່ງນີ້:

1. ການກວດກາ ຕາມລະບົບ ປົກກະຕິ;
2. ການກວດກາ ໂດຍແຈ້ງ ໃຫ້ຮູ້ລ່ວງໜ້າ;
3. ການກວດກາ ແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາ ອັນແນ່ນອນ.

ການກວດກາ ໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດກາ ນອກແຜນການເມື່ອເຫັນວ່າ ມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ ຜູ້ທີ່ຈະຖືກກວດກາ ຊາບລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ທີ່ຈະຖືກກວດກາ ຊາບລ່ວງໜ້າ.

ໃນການດຳເນີນການກວດກາວຽກງານອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບເຈົ້າໜ້າທີ່ກວດກາຕ້ອງປະຕິບັດໃຫ້ຖືກຕ້ອງຕາມລະບຽບກົດໝາຍ ຢ່າງເຂັ້ມງວດ.

## ໝວດທີ VII ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການ ຕໍ່ຜູ້ລະເມີດ

### ມາດຕາ 44. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ຫລື ການຈັດຕັ້ງ ທີ່ເປັນແບບຢ່າງໄດ້ປະກອບສ່ວນ ຢ່າງຕັ້ງໜ້າເຂົ້າໃນ ວຽກງານອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ ຈະໄດ້ຮັບການຍ້ອງຍໍ ຫລື ການປະຕິບັດນະໂຍບາຍຕ່າງໆ ຊຶ່ງລັດຖະບານເປັນຜູ້ກຳນົດລະອຽດ.

### ມາດຕາ 45. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫລື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຫລື ລະບຽບການຕ່າງໆ ກ່ຽວກັບວຽກງານອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ ຈະຖືກສຶກສາອົບຮົມ, ປັບໃໝ ຫລື ລົງໂທດ ທາງອາຍາແລ້ວແຕ່ກໍລະນີ ເບົາ ຫລື ໜັກ.

### ມາດຕາ 46. ມາດຕະການສຶກສາອົບຮົມ

ບຸກຄົນ ຫລື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຫລື ລະບຽບການຕ່າງໆ ກ່ຽວກັບວຽກງານອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ ໃນສະຖານເບົາບາງ ຈະຖືກຕັກເຕືອນ ແລະ ສຶກສາອົບຮົມ ເຊັ່ນ: ບໍ່ເຮັດອະນາໄມສາມສະອາດ, ລ້ຽງ ຫລື ຮັກສາສັດ ຢູ່ກ້ອງຕະລ່າງເຮືອນ, ບໍ່ເຮັດອະນາໄມ ອ້ອມແອ້ມເຮືອນ ແລະ ຮ່ອງນ້ຳ, ປ່ອຍໃຫ້ມີໜອນຍຸງນຳເຊື້ອ, ບໍ່ມີວິດຖ່າຍ, ບໍ່ພາລູກໄປສັກຢາ ຕາມລະບຽບຫລັກການ ສາທາລະນະສຸກ ແລະ ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

### ມາດຕາ 47. ມາດຕະການປັບໃໝ

ບຸກຄົນ ຫລື ການຈັດຕັ້ງ ຈະຖືກປັບໃໝ ໃນກໍລະນີດັ່ງນີ້ :

1. ຜູ້ທີ່ຖືກ ສຶກສາອົບຮົມ ແລະ ກ່າວເຕືອນຕາມມາດຕາ 46 ເທິງນີ້ມາແລ້ວສອງຄັ້ງແຕ່ຫາກບໍ່ຍອມປ່ຽນແປງ.

2. ຜູ້ທີ່ໄດ້ຖິ້ມ ຫລື ຖອກເທສິ່ງເສດເຫລືອ, ຊາກສັດ ຫລື ທາດເຄມີໃສ່ຕະຄອງຮ້ອງນ້ຳ, ແມ່ນ້ຳລຳເຊ, ສວນສາທາລະນະ, ຖະໜົນຫົນທາງ ຫລື ຖິ້ມໃສ່ສະຖານທີ່ອື່ນໆ

3. ຜູ້ທີ່ໄດ້ລະເມີດບົດບັນຍັດໃດໜຶ່ງ ຂອງມາດຕາ 12 ຫາ 24 ຂອງກົດໝາຍ ສະບັບນີ້.

ສຳລັບການປັບໃໝນັ້ນ ຈະມີລະບຽບການສະເພາະຕ່າງຫາກ.

**ມາດຕາ 48. ມາດຕະການທາງອາຍາ**

ຜູ້ທີ່ໄດ້ລະເມີດກົດໝາຍສະບັບນີ້ ແລະ ລະບຽບການ ຕ່າງໆ ກ່ຽວກັບວຽກງານອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ ຊຶ່ງກໍ່ໃຫ້ເກີດຄວາມເສັຽຫາຍຕໍ່ສຸຂະພາບ ຫລື ຊີວິດຂອງຄົນເຊັ່ນ: ບໍ່ວາງມາດຕະການປ້ອງກັນຢູ່ສະຖານທີ່ກໍ່ສ້າງ ຫລື ສ້ອມແປງ ເປັນເຫດໃຫ້ວັດຖຸກໍ່ສ້າງຕົກໃສ່ຄົນ ເຮັດໃຫ້ບາດເຈັບ ຫລື ເສຍຊີວິດ; ຖິ້ມຊາກສັດ, ສານເຄມີໃສ່ແຫລ່ງນ້ຳດື່ມ ຫລື ແຫລ່ງນ້ຳໃຊ້ ຊຶ່ງພາໃຫ້ຄົນເຈັບປ່ວຍເປັນພະຍາດ; ຜະລິດເຄື່ອງບໍລິໂພກ, ເຄື່ອງໃຊ້ສອຍປະຈຳວັນ, ເຄື່ອງຫລິ້ນເດັກນ້ອຍ, ເຄື່ອງສຳອາງທີ່ມີສານເຄມີເປັນພິດ ຫລື ມີເຊື້ອພະຍາດທີ່ເປັນອັນຕະລາຍຕໍ່ສຸຂະພາບ ຫລື ຕໍ່ຊີວິດຂອງຄົນ ຈະຖືກໂທດທາງອາຍາແລ້ວແຕ່ກໍລະນີເບົາ ຫລືໜັກ.

## ໝວດທີ VIII ບົດບັນຍັດສຸດທ້າຍ

**ມາດຕາ 49. ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດ ກົດໝາຍສະບັບນີ້.

**ມາດຕາ 50. ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫລັງ ຫນຶ່ງຮ້ອຍຊາວວັນ ນັບແຕ່ມື້ ປະທານປະເທດແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ ປະກາດໃຊ້ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ